

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບົດສະຫຼຸບ 1 ປີ

ໂຄງການ ຄຸ້ມຄອງປ່າສະຫງວນ ນ້ຳລານ ເມືອງບຸນໃຕ້ ແຂວງຜົ້ງສາລີ

ສົກປີ 2018

ໂດຍ: ພະແນກກະສິກຳ ແລະ ປ່າໄມ້

ແຂວງຜົ້ງສາລີ

I. ພາກສະເໜີ

ປ່າສະຫງວນນ້ຳລານ ເປັນປ່າສະຫງວນ ລະດັບແຂວງ ມີເນື້ອທີ່ 15.200 ເຮັກຕາ ມີເນື້ອທີ່ປົກຫຸ້ມປ່າໄມ້ ປະມານ 80 % ຕັ້ງຢູ່ທິດຕາເວັນຕົກສ່ຽງໃຕ້ ຂອງເມືອງບູນໃຕ້ ແຂວງຜົ້ງສາລີ ທິດເໜືອ ຕິດກັບສາຍນ້ຳລານ ແລະ ຢູ່ເສັ້ນຂະໜານທີ 21· 20' 10 ", ທິດໃຕ້ ຕິດກັບ ຊາຍແດນ ເມືອງນາໝໍ້ ແຂວງ ອຸດົມໄຊ ແລະ ສປປ ຈີນ ແລະ ຢູ່ເສັ້ນຂະໜານທີ່ 21· 20' 10 " ທິດຕາເວັນອອກ ຕິດກັບ ບ້ານຈາລ່ອງ ໃໝ່, ບ້ານລ່ອງນາຍເກົ່າ ແລະ ບ້ານລ່ອງນາຍໃໝ່ ທິດຢູ່ ເສັ້ນແວງທີ່ 101· 55' 20 " ທິດຕາເວັນຕົກຕິດ ກັບ ສປ ຈີນ ເສັ້ນແວງທີ 101· 43' 40 "

- ໂຄງການ: ຄຸ້ມຄອງປ່າສະຫງວນ ນ້ຳລານ ເມືອງບູນໃຕ້
- ອົງການຈັດຕັ້ງ: ພະແນກກະສິກຳ ແລະ ປ່າໄມ້ແຂວງຜົ້ງສາລີ
- ງົບປະມານ ໂຄງການ: 600.000.000 ກີບ (ຫົກຮ້ອຍລ້ານກີບ)
- ໄລຍະປະຕິບັດໂຄງການຕາມສັນຍາ: 5 ປີ ມື້ເລີ່ມ 11 ກໍລະກົດ 2016 ມື້ສຳເລັດ 11 ກໍລະກົດ 2020.
- ໄລຍະປະຕິບັດໂຄງການຕົວຈິງ ເລີ່ມແຕ່ວັນທີ 1 ມີນາ 2017.

+ ຈຸດປະສົງ ໂຄງການ:

- ເພື່ອສ້າງຄວາມເຂັ້ມແຂງ ໃຫ້ພະນັກງານແຂວງ,ເມືອງ ແລະ ບ້ານເປັນເຈົ້າການໃນການຄຸ້ມຄອງ ປ່າສະຫງວນນ້ຳລານ ໃຫ້ອຸດົມສົມບູນ ດີຂຶ້ນເທື່ອລະກ້າວ.

+ ຕົວຊີ້ວັດໂຄງການ:

- ຊີວະນາໆພັນ ໃນພື້ນທີ່ປ່າສະຫງວນ ນ້ຳລານ ຕ້ອງໄດ້ຖືກວັດແທກດ້ວຍຄະແນນປະສິດຕິຜົນ ຂອງການຄຸ້ມຄອງປະຈຳປີ.
- ການຈັດຕັ້ງເປົ້າໝາຍໂຄງການຄຸ້ມຄອງປ່າສະຫງວນນ້ຳລານ ປະຕິບັດໄປຕາມເງື່ອນໄຂຂອງສັນຍາ ໃນການຄຸ້ມຄອງອະນຸລັກປົກປັກຮັກສາປ່າສະຫງວນ.
- ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ໂດຍການວັດແທກຈຳນວນພະນັກງານຂອງລັດ ແລະ ປະຊາຊົນ ທີ່ເຂົ້າຮ່ວມໃນການຄຸ້ມຄອງປ່າສະຫງວນນ້ຳລານ.

II. ກິດຈະກຳໂຄງການ (ໃນບົດສະເໜີໂຄງການທຳອິດ)

ອົງປະກອບ 1. ປະຊຸມ,ສຳມະນາ ແລະ ຝຶກອົບຮົມ

ກິດຈະກຳ 1.1 ຝຶກອົບຮົມການຄຸ້ມຄອງກອງທຶນບ້ານ

1.2 ຝຶກອົບຮົມການປູກຝັງລ້ຽງສັດ

1.3 ປະຊຸມນຳໂຄງການ ກປສ

1.4 ປະຊຸມປະຈຳປີ

1.5 ຄຸ້ມຄອງໂຄງການ

1.6 ທັດສະນະສຶກສາແລກປ່ຽນບົດຮຽນຕ່າງແຂວງ

1.7 ກອງປະຊຸມຜູ້ມີສ່ວນຮ່ວມຂັ້ນແຂວງ

1.8 ກອງປະຊຸມຜູ້ມີສ່ວນຮ່ວມຂັ້ນເມືອງ

1.9 ລົງສ້າງຄວາມເຂົ້າໃຈກ່ຽວກັບໂຄງການ

ອົງປະກອບ 2.

ກິດຈະກຳ 2.1 ລົງເກັບກຳຂໍ້ມູນເສດຖະກິດ-ສັງຄົມແລະວາງແຜນປັບປຸງຊີວິດການເປັນຢູ່ແບບມີສ່ວນຮ່ວມ

2.2 ສ້າງແຜນຄຸ້ມຄອງປ່າສະຫງວນ

2.3 ໂຄສະນາ ເຜີຍແຜ່ ແລະ ປຸກຈິດສຳນຶກ

2.4 ພິມແຜນການ ແລະ ສິ່ງພິມ

2.5 ແຕ່ງຕັ້ງອາສາສະມັກປ່າໄມ້ຂັ້ນບ້ານ

2.6 ສ້າງຈຸດກວດກາ

2.7 ສ້າງປ້າຍປ່າສະຫງວນ

2.8 ລົງເກັບກຳຂໍ້ມູນຈາກກອງຖ່າຍສຳຫຼວດສັດປ່າ

2.9 ກວດກາລາດຕະເວນ

2.10 ຄຸ້ມຄອງຈັດສັນທີ່ດິນປ່າໄມ້

2.11 ສ້າງຕັ້ງກອງທຶນອະນຸລັກບ້ານ

2.12 ສະໜັບສະໜູນກອງທຶນບ້ານ

2.13 ລົງປ່ອຍກອງທຶນອະນຸລັກບ້ານ

ອົງປະກອບ 3. ການບໍລິຫານ ແລະ ຄຸ້ມຄອງໂຄງການ

ກິດຈະກຳ 3.1 ຈັດພິມ ແລະ ສຳເນົາຕ່າງໆ ຂອງກອງປະຊຸມ

3.2 ຊື້ ລິດຈັກ

3.3 ຄອມພິວເຕີ (Note book)

3.4 ກ້ອງຖ່າຍຮູບ

3.5 ກ້ອງ ວີດີໂອ

3.6 ໂທລະສັບ + ແຟັກ

3.7 ການນຳໃຊ້ບໍລິຫານ,ສາທາລະນະ(ນ້ຳປະປາ,ໄຟຟ້າ,ໂທລະສັບ)

3.8 ອຸປະກອນຮັບໃຊ້ຫ້ອງການຕ່າງໆ

3.9 ບຳລຸງຮັກສາຫ້ອງການຂັ້ນແຂວງ

3.10 ບຳລຸງຮັກສາຫ້ອງການຂັ້ນເມືອງ

III. ຄາດຄະເນຜົນໄດ້ຮັບຂອງໂຄງການ ທີ່ວາງໄວ້ ໃນປີ 2018 ໃນບົດສະເໜີໂຄງການ

ລະຫັດກິດຈະກຳ	ລາຍການ	ຜົນໄດ້ຮັບທີ່ວາງໄວ້ (ອະທິບາຍລະອຽດ)	ບໍ່ສຳເລັດຜົນ	ໝາຍເຫດ
ອົງປະກອບ 1	ເພື່ອສ້າງຄວາມອາດສາມາດໃນການຄຸ້ມຄອງປ່າສະຫງວນນ້ຳລານ			
	ກິດຈະກຳ 1.1: ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ (ສຳລັບ ປະຊາຊົນ) ຝຶກອົບຮົມດ້ານວິຊາການ ໃນການຄຸ້ມຄອງບໍລິຫານກອງທຶນບ້ານ ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີປະສົບການກ່ຽວຂ້ອງລົງໄປຝຶກ ຢູ່ກັບບ້ານໃຊ້ເວລາຝຶກປະມານ 5 ອັນຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 4 ຄົນ ໃນນັ້ນມີແມ່ຍິງ 1 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 40 ຄົນ ຍິງ 10 ຄົນ.			
	ກິດຈະກຳ 1.2: ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ) ຝຶກອົບຮົມດ້ານວິຊາການໃນການປູກຝັງ (ເຕັກນິກການປູກເຂົ້າ, ປູກສາລີ, ປູກມັນຕົ້ນ, ປູກພືດອື່ນໆ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ອັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 30 ຄົນ ຍິງ 20 ຄົນ.			
	ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ) ຝຶກອົບຮົມດ້ານວິຊາການໃນການລ້ຽງສັດ (ເຕັກນິກການລ້ຽງງົວ, ລ້ຽງແບ້, ລ້ຽງໝູ, ລ້ຽງໄກ່, ລ້ຽງເປັດ) ໂດຍການຈັດຫາເອົາຄູຝຶກຜູ້ທີ່ມີ ປະສົບການກ່ຽວຂ້ອງລົງໄປຝຶກຢູ່ກັບບ້ານ ໃຊ້ເວລາຝຶກປະມານ 5 ອັນ ຊຶ່ງຄາດໝາຍໃຫ້ໄດ້ບຸກຄະລາກອນ			

	ບ້ານລະ 3 ຄົນ ໃນນັ້ນມີແມ່ຍິງ 2 ຄົນ ລວມຈຳນວນຝຶກໃນ 10 ບ້ານມີ 30 ຄົນ ຍິງ 20 ຄົນ.			
	ກິດຈະກຳ 1.4: ໄປປະຊຸມນຳ ປກສ ການເຂົ້າຮ່ວມກອງປະຊຸມຕ່າງໆ, ການເຂົ້າຮ່ວມປຶກສາຫາລືວຽກ ງານທີ່ຈຳເປັນ, ການຂຶ້ນໄປປຶກສາຫາລືບາງວຽກງານແລະອື່ນໆຢູ່ຫ້ອງການ ກປສ ທີ່ວຽງຈັນ ແລະ ບ່ອນອື່ນໆ.			
	ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ກ່ອນການຈັດຕັ້ງປະຕິບັດໂຄງການ ມີຄວາມຈຳເປັນຕ້ອງໄດ້ລົງໄປຫາແຕ່ລະບ້ານເປົ້າໝາຍ ເພື່ອຮ່ວມປຶກສາຫາລືໃນການກະກຽມ ການດຳເນີນງານຂອງໂຄງການ ພ້ອມນີ້ກໍສ້າງໃຫ້ບ້ານຕ້ອງມີຄວາມເຂົ້າໃຈຕໍ່ ທິດທາງແຜນການ ຈຸດປະສົງເປົ້າໝາຍຂອງໂຄງການ ທັງນີ້ກໍເພື່ອຄວາມສະດວກໃນການປະສານງານ ແລະ ການດຳເນີນໂຄງການຍ່ອຍ ຢູ່ແຕ່ລະບ້ານ ເຊິ່ງການລົງໄປຫາບ້ານຈະປະກອບມີຜູ້ຕາງໜ້າຄະນະກຳ ມະການຊີ້ນຳຂັ້ນແຂວງ, ຜູ້ປະສານງານຂັ້ນເມືອງ ໂດຍມີຈຳນວນຄົນ ຈຳນວນ 5 ຄົນ ຈາກເມືອງ ແລະ ແຂວງ.			
	ກິດຈະກຳ 1.6: ທັດສະນະສຶກສາແລກປ່ຽນບົດຮຽນກັບຕ່າງແຂວງ ຄະນະໂຄງການ ນຳໂດຍຄະນະພະແນກ ຈະເຂົ້າຮ່ວມແລກປ່ຽນບົດຮຽນກັບບັນດາແຂວງທີ່ມີໂຄງການປະເພດດຽວກັນເພື່ອຖອດຖອນບົດຮຽນການຄຸ້ມຄອງ ແລະ ບໍລິຫານໂຄງການເພື່ອເປັນການສ້າງຄວາມເຂັ້ມ ແຂງອີກຮູບແບບນຶ່ງໃຫ້ແກ່ພະນັກງານດ້ວຍການຖອດຖອນບົດຮຽນ ຈາກບ່ອນທີ່ມີປະສົບການທີ່ມີຜົນສຳເລັດເພື່ອ			

	ມາໝຸນໃຊ້ໃນເຂດຂອງຕົນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ທີ່ຜ່ານມາໄດ້ມີການປັບປຸງ ໃຫ້ມີ ປະສິດທິຜົນດີຂຶ້ນ ແຂວງຜົ້ງສາລີ ເປີດກອງປະຊຸມຖອດຖອນບົດຮຽນ ສົກປີ 2018			
ອົງປະກອບ 2	ສະໜັບສະໜຸນ ຄຸ້ມຄອງປ່າສະຫງວນ			
	ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປຸກຈິດສຳນຶກ ໂຄສະນາປຸກຈິດສຳນຶກໃນລະດັບພື້ນຖານ ໂດຍນຳໃຊ້ເຕັກນິກຕ່າງໆ, ເຜີຍແຜ່ລະບຽບກົດໝາຍ ແລະ ວິທີການທີ່ດີກ່ຽວກັບການຄຸ້ມຄອງ ຊັບພະຍາກອນທຳມະຊາດໂດຍຊຸມຊົນ ແລະ ປ່າສະຫງວນ, ນຳໃຊ້ເຄື່ອງມືປະຈັກຕາເຊັ່ນ ໂປສະເຕີ, ລາຍການໂຄສະນາທາງວິທະຍຸ ກ່ຽວກັບກິດຈະກຳ ອະນຸລັກຊັບພະຍາກອນປ່າໄມ້ ແລະ ສັດນ້ຳ-ສັດປ່າ,ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ກ່ອນ ແລະ ຫຼັງການຈັດຕັ້ງປະຕິບັດ.			
	ກິດຈະກຳ 2.2: ຄຸ້ມຄອງຈັດສັນທີ່ດິນ - ລົງປຶກສາຮ່ວມປະຊາຊົນເພື່ອວາງແຜນການນຳໃຊ້ທີ່ດິນພ້ອມສ້າງແຜນທີ່ - ຮ່ວມກຳນົດເຂດການນຳໃຊ້ດິນແຕ່ລະປະເພດ ພາຍໃນບ້ານ. - ຮ່ວມສ້າງລະບຽບການຄຸ້ມຄອງນຳໃຊ້ທີ່ດິນຂັ້ນບ້ານ. - ຮ່ວມສ້າງຕັ້ງຄະນະກຳມະການຮັບຜິດຊອບຂັ້ນບ້ານ. - ຮ່ວມກຳນົດເຂດຄຸ້ມຄອງປ່າໄມ້ ແລະ ຟື້ນຟູປ່າໄມ້. - ຮ່ວມຈັດສັນເຂດຄຸ້ມຄອງແລະນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ - ສ້າງ ແລະ ປັກປ້າຍຊີ້ບອກປະເພດເນື້ອທີ່ຕ່າງໆຂອງບ້ານ. - ສ້າງຕັ້ງໜ່ວຍງານຄຸ້ມຄອງອະນຸລັກ			

	ຊັບພະຍາກອນປ່າໄມ້ຂັ້ນບ້ານໃນ ການຄຸ້ມຄອງປ່າສະຫງວນນ້ຳລານ ເພື່ອເຄື່ອນໄຫວຕິດຕາມກວດກາ ລາດຕະເວນ.			
	ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ - ລົງຮ່ວມເກັບກຳຂໍ້ມູນເສດຖະກິດ - ສັງຄົມເພື່ອວາງແຜນປັບປຸງຊີວິດ ການເປັນຢູ່ຊຸມຊົນ. - ສະໜັບສະໜູນທຶນສ້າງເປັນກອງ ທຶນອະນຸລັກບ້ານ.			
	ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ - ອອກແບບ, ກຳນົດຈຸດສ້າງຈຸດກວດ ກາຮ່ວມກັບເມືອງ ແລະ ບ້ານກ່ຽວ ຂ້ອງ - ປະມູນການກໍ່ສ້າງ - ຕິດຕາມການກໍ່ສ້າງ - ມອບ-ຮັບຈຸດກວດກາທີ່ກໍ່ສ້າງສຳເລັດ - ປະກອບພະນັກງານເຂົ້າປະຈຳ 2 ສະ ຫາຍ/ຈຸດກວດກາ - ອອກກວດກາລາດຕະເວນປົກກະຕິ.			
ອົງປະກອບ 3	**ຄຸ້ມຄອງບໍລິຫານໂຄງການ**			
	ການບໍລິຫານ ແລະ ການຄຸ້ມຄອງ ໂຄງການ ຈະຕ້ອງໄດ້ປະຕິບັດຕາມຄູ່ມື ການຈັດຕັ້ງປະຕິບັດໂຄງການ ລວມທັງ ການຄຸ້ມຄອງການເງິນ, ການຈັດຊື້-ຈັດ ຈ້າງ, ການກວດກາຕິດຕາມແລະການລາຍ ງານ ໂດຍໄດ້ຮັບ ການຝຶກອົບຮົມຈາກ ກປສ ແລະ ຮັບປະກັນກິດຈະກຳດັ່ງຕໍ່ໄປ ນີ້: 3.1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະ ສ້າງຄວາມເຂົ້າໃຈ ຮ່ວມກັນ ໃນທີມງານ			

	3.2. ຈັດຊື້ອຸປະກອນ ໂຄງການ 3.3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ກ່ຽວກັບຄວາມຄືບໜ້າກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດ ລວມທັງຕິຊີ້ວັດ ແລະ ຜົນທີ່ໄດ້ຮັບ ແລະ ການເງິນ (ລວມທັງການຈັດຊື້) ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂຶ້ນແຜນການ 6 ເດືອນ ແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ. 3.4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະ ກັບ ກປສ.			
C3.01	ຈັດພິມ ແລະ ຈັດສິ່ງເອກະສານ	ໂຄງການຍອຍຈັດຊື້ເອງ	ສິກປີ 2019	
C3.02	ຊື້ລິດຈັກ	ມອບໃຫ້ຫ້ອງການ ກປສ ເປັນຜູ້ຈັດຊື້ໃຫ້	ຈັດຊື້ ສຳເລັດແລ້ວ	
C3.03	ຊື້ຄອມພິວເຕີ			
C3.04	ຊື້ກ້ອງຖ່າຍ			
C3.05	ຊື້ກ້ອງວີດີໂອ			
C3.06	ຊື້ໂທລະສັບ +ແຟັກ			
C3.07	ການນຳໃຊ້ບໍລິຫານ	ໂຄງການຍອຍຈັດຊື້ເອງ	ສືບຕໍ່ສິກປີ 2019	
C3.08	ອຸປະກອນຮັບໃຊ້ຫ້ອງການ			
C3.09	ບຳລຸງຮັກສາຫ້ອງການຂັ້ນແຂວງ			
C3.10	ຈັດຊື້ອຸປະກອນຮັບໃຊ້ຫ້ອງການ			

I. ຜົນການເຄື່ອນໄຫວໄລຍະ 1 ປີ ໂຄງການທີ່ໄປ ປະຕິບັດ ຕາມຕົວຈິງ (ສິກປີ 2018)

ລະຫັດກິດຈະກຳ	ລາຍການ	ຜົນສຳເລັດຕົວຈິງ (ຄິດໄລເປັນເປີເຊັນ)	ບໍ່ສຳເລັດຜົນ	ໝາຍເຫດ
A	ອົງປະກອບ 1			
C1.06	ທັດສະນະສຶກສາແລກປ່ຽນບົດຮຽນຢູ່ແຂວງ	ເຂົ້າຮ່ວມກອງປະຊຸມທັດສະນະສຶກສາ ຖອດຖອນແລກປ່ຽນບົດຮຽນນຳພະແນກກະສິກຳ ແລະ ປ່າໄມ້ແຂວງໄຊຍະບູລີ ຄັ້ງວັນທີ .....ພະຈິກ 2018 ມີຜູ້ເຂົ້າຮ່ວມທັງໝົດມີຈຳນວນ ..... ທ່ານ ຍິງ ... ທ່ານ 100% - ກ່ຽວກັບການຄຸ້ມຄອງປົກປັກຮັກສາປ່າໄມ້ ຊັບພະຍາກອນປ່າໄມ້ - ການຄຸ້ມຄອງນຳໃຊ້ຊັບພະຍາກອນ - ມາດຕະການຕໍ່ຜູ້ລະເມີດ	0	

		- ວິທີການແກ້ໄຂ - ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ ໃນເຂດປ່າສະຫງວນ.		
B	ອົງປະກອບ 2			
C2.09	ລົງກວດກາລາດຕະເວນຢູ່ປ່າສະຫງວນ ນ້ຳລານ	ລົງກວດກາລາດຕະເວນຢູ່ຂອບເຂດປ່າສະຫງວນນ້ຳລານ ຈຳນວນ 1 ຄັ້ງ 100%	0	
C2.11	ແຕ່ງຕັ້ງຄະນະຮັບຜິດຊອບກອງທຶນພັດທະນາຂັ້ນບ້ານ	ແຕ່ງຕັ້ງຄະນະຮັບຜິດຊອບເງິນກອງທຶນພັດທະນາຂັ້ນບ້ານ (ປ່ອຍທຶນລ້ຽງແບ້)ຈຳນວນ 2 ບ້ານຄື: 1.ບ້ານລ້ອງນາຍໃໝ ຈານວນ 4 ທ່ານ 2.ບ້ານລ້ອງນາຍເກົ່າ ຈານວນ 4 ທ່ານ ຮ່າງຂໍ້ຕົກລົງເຊັນເຈົ້າເມືອງ. 100%	0	
C2.12 C2.13	- ສະໜັບສະໜູນກອງທຶນອະນຸລັກຂອງຊຸມຊົນ - ປ່ອຍເງິນກອງທຶນພັດທະນາຂັ້ນບ້ານ (ປ່ອຍແບ້)	ປ່ອຍເງິນສະໜັບສະໜູນກອງທຶນອະນຸລັກຊຸມຊົນ ເປັນເງິນກອງທຶນພັດທະນາຂັ້ນບ້ານ (ເປັນທຶນໝູນວຽນລ້ຽງແບ້) ໃຫ້ບ້ານຈຳນວນ 2 ບ້ານຄື: 1. ບ້ານລ້ອງນາຍໃໝ່ ມີຈຳນວນຄອບຄົວລ້ຽງແບ້ມີ 5 ຄອບຄົວ,ຄອບຄົວລະ 4 ໂຕ ລວມ 20 ໂຕ 2. ບ້ານລ້ອງນາຍເກົ່າ ມີຈຳນວຄອບຄົວລ້ຽງແບ້ມີ 4 ຄອບຄົວ,ຄອບຄົວລະ 4 ໂຕ ລວມ 18 ໂຕ (ມີຄອບຄົວ 1 ຮັບລ້ຽງ 6 ໂຕ) ລວມທັງໝົດ ປ່ອຍແບ້ ຈຳນວນ 38 ໂຕ. - ໄດ້ເຊັນມອບ-ຮັບກັນ ເປັນທີ່ຮຽບຮ້ອຍແລ້ວ 100%	0	
C	ອົງປະກອບ 3			
	ຈັດຊື້ ອຸປະກອນ	ສຳເລັດ 100%	0	

IV. ຕົວຊີ້ວັດ ທີ່ກຳນົດໄວ້ໃນກອບ ຜົນໄດ້ຮັບຂອງໂຄງການ

ລ/ດ	ຕົວຊີ້ວັດ	ແຜນການ	ສຳເລັດ	ໝາຍເຫດ
1	ທັດສະນະສຶກສາແລກປ່ຽນບົດຮຽນຕ່າງແຂວງ	1	1	
2	ລົງກວດກາລາດຕະເວນຢູ່ປ່າສະຫງວນ ນ້ຳລານ	1	1	
3	ແຕ່ງຕັ້ງຄະນະຮັບຜິດເງິນກອງທຶນພັດທະນາ	1	1	

	ຂັ້ນບ້ານ ເປັນທຶນໝູນວຽນລ້ຽງແບ້			
4	ປ່ອຍເງິນສະໜັບສະໜູນກອງທຶນອະນຸລັກຊຸມຊົນ ເປັນເງິນກອງທຶນພັດທະນາຂັ້ນບ້ານ (ເປັນທຶນໝູນວຽນລ້ຽງແບ້)	1	1	
5	ອຸປະກອນຮັບໃຊ້ຫ້ອງການ	5	5	

V. ສະຫຼຸບການນຳໃຊ້ງົບປະມານຂອງໂຄງການ ພາຍໃນ 2018

- ງົບປະມານທັງໝົດ 600.000.000 ກີບ
- ເງິນທີ່ໄດ້ຮັບທັງໝົດ ພາຍໃນ 1 ປີ 141.077.000 ກີບ (ໜຶ່ງຮ້ອຍສີ່ສິບເອັດລ້ານເຈັດສິບເຈັດພັນກີບ)
- ກປສ ຈ່າຍໂດຍກົງ 85.077.000 ກີບ (ແປດສິບຫ້າລ້ານເຈັດສິບເຈັດພັນ ກີບ)
- ເງິນຈັດຊື້ອຸປະກອນ 56.000.000 ກີບ (ຫ້າສິບຫົກລ້ານກີບ) ນຳພະແນກຈັດຊື້-ຈັດຈ້າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
- ເງິນທີ່ໄດ້ສະຫຼຸບ 85.077.000 ກີບ (ແປດສິບຫ້າພັນ ເຈັດສິບເຈັດພັນກີບ)
- ເງິນທີ່ຍັງບໍ່ໄດ້ສະຫຼຸບ 262.250 ກີບ (ສອງແສນຫົກສິບສອງພັນສອງຮ້ອຍຫ້າສິບກີບ)
- ເງິນທີ່ຂໍຄ່ຽນໃນສົກປີ 2019 ຈຳນວນເງິນ 318.430.000 ກີບ (ສາມຮ້ອຍສິບແປດລ້ານ ສີ່ແສນສາມສິບພັນກີບ)
- ມື້ສິ້ນປິດລາຍງານການເງິນສຸດທ້າຍ ວັນທີ 25 ມັງກອນ 2019.

VI. ບົດຮຽນທີ່ຖອດຖອນໄດ້ພາຍໃນ 2018.

+ ດ້ານດີ

- ທາງກອງທຶນປົກປັກຮັກສາສິ່ງແວດລ້ອມ ໄດ້ໂອນເງິນເຂົ້າ ໃຫ້ໂຄງການຍອຍ ເປັນແຕ່ລະງວດ ແລະ ໄດ້ຈັດຕັ້ງປະຕິບັດວຽກງານຕາມແຜນງານຂອງໂຄງການຍອຍ ທີ່ໄດ້ລະບຸໄວ້ໃນແຕ່ລະງວດ
- ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ,ເມືອງ ແລະ ບ້ານ ກໍ່ໃຫ້ຄວາມສຳຄັນຕໍ່ກັບວຽກງານການຄຸ້ມຄອງ ປ່າສະຫງວນ ນ້ຳລານ ຕາມນະໂຍບາຍ ຂອງແຂວງ ແລະ ເມືອງ.

+ ດ້ານອອນ

- ການສະຫຼຸບລາຍງານຂອງໂຄງການຍອຍ ບາງຄັ້ງການລາຍງານຂໍ້ມູນໃຫ້ຫ້ອງການ ກປສ ຍັງມີການຊັກຊ້າ.
- ສາຍເຫດທີ່ພາໃຫ້ການຈັດຕັ້ງປະຕິບັດວຽກງານມີການຊັກຊ້າ ຍ້ອນເນື່ອງຈາກສະພາບດິນຟ້າອາກາດ ບໍ່ເອື້ອອຳນວຍຄວາມສະດວກ ເພາະວ່າຊ່ວງໄລຍະນັ້ນຖືກຍາມລະດູຝົນ ມີຄວາມຫຍຸ້ງຍາກໃນການເຂົ້າຫາຂອບເຂດບ້ານ ເພາະວ່ານ້ຳໃຫຍ່ ລິດຂ້າມໄປບໍ່ໄດ້.

+ ຂໍ້ຄົງຄ້າງ ແລະ ວິທີການແກ້ໄຂ

- ການຄຽນເງິນ ບາງຄັ້ງກໍ່ຍັງບໍ່ຖືກຕ້ອງ ເຮັດໃຫ້ການໂອນເງິນມີການຊັກຊ້າ ແລະ ບໍ່ທ່ວງທັນກັບເວລາ.

+ ວິທີການແກ້ໄຂ

- ຈະພະຍາຍາມຄຽງເງິນໃນແຕ່ລະງວດໃຫ້ທ່ວງທັນກັບເວລາ ພ້ອມທັງປົດລາຍງານ ປະຈຳເດືອນ, ໄຕມາດ ແລະ ສົກປີ.

VII. ຂໍ້ສະເໜີ ຕໍ່ຫ້ອງການກອງທຶນ ປົກປັກຮັກສາສິ່ງແວດລ້ອມ

1. ສະເໜີໃຫ້ທາງກອງທຶນປົກປັກຮັກສາສິ່ງແວດລ້ອມ ຊ່ວຍແນະນຳໃຫ້ໂຄງການຍອຍ ຕື່ມໃນເມື່ອເອກະສານບໍ່ຖືກຕ້ອງ.

VIII. ການປະເມີນໂຄງການ

ໂຄງການຄຸ້ມຄອງປ່າສະຫງວນນ້ຳລານ CBI 006 Psl ໃນສົກປີ 2018 ມີກິດຈະກຳທັງໝົດ 23 ກິດຈະກຳ ແລະ ສຳເລັດ 5 ກິດຈະກຳ

23 X 2 = 46 (100 %)

- 5 ກິດຈະກຳ ສຳເລັດ X 2 = 10
- 18 ກິດຈະກຳ ຍັງບໍ່ທັນໄດ້ເລີ້ມ X 0 = 0

10 X 100 / 46 = 21.7 %

IX. ມີແຜນ ແຜນການຈັດຕັ້ງປະຕິບັດ ສົກປີ 2019 ຄັດຕິດ ຊ້ອນທ້າຍ.

ຜົ້ງສາລີ, ວັນທີ 25 ມັງກອນ 2019

(ຜູ້ຊີ້ນຳໂຄງການ)	(ຫົວໜ້າໂຄງການ)
ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້	ຫົວໜ້າຂະແໜງຄຸ້ມຄອງຊັບພະຍາກອນປ່າໄມ້
ໄມເພັດ ບຸບຜາ	ປ່ຽງສົກ ພົມມະສິ

ແຕ່ງຕັ້ງຄະນະຮັບຜິດຊອບເງິນກອງທຶນພັດທະນາຂັ້ນບ້ານ



ພິທີມອບ - ຮັບ

ເງິນສະໜັບສະໜຸນກອງທຶນອະນຸລັກຂອງຊຸມຊົນ,ເປັນເງິນກອງທຶນພັດທະນາຂັ້ນບ້ານ ເປັນທຶນໝຸນວຽນ ລ້ຽງແບ້ ໃຫ້ກັບ ບ້ານລ້ອງນາຍເກົ່າ ແລະ ບ້ານລ້ອງນາຍໃໝ່ ເພື່ອການຄຸ້ມຄອງປົກປັກຮັກສາປ່າໄມ້ ຊັບພະຍາກອນປ່າໄມ້, ສັດນ້ຳ - ສັດປ່າ, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນ ໃນເຂດປ່າສະຫງວນ ນ້ຳລານ ເມືອງບຸນໃຕ້.

1. ບ້ານລ້ອງນາຍເກົ່າ



2. ບ້ານລ້ອງນາຍໃໝ່



ເວລາ ມອບ - ຮັບ ແບ້ ມີແມ່ໜຶ່ງ ໄດ້ເກີດລູກອອກມາ 2 ໂຕ.



ລົງກວດກາລາດຕະເວນຢູ່ປ່າສະຫງວນນ້ຳລາມ



ແຄມນອນຂອງຄົນລ່າສັດນ້ຳ ແລະ ສັດປ່າ



ເມືອງບຸນໃຕ້


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ພັກປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າ ຍືນຍົງ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ພັກປະຊາຊົນ ປະຕິວັດລາວ ທີ່ມີກຽດສະຫງ່າ ຍືນຍົງ

ທັດສະນະສຶກສາແລກປ່ຽນບົດຮຽນກ່ຽວກັບການຄຸ້ມຄອງປ່າໄມ້ ຊັບພະຍາກອນປ່າໄມ້ ຢູ່ພະແນກກະສິກຳ ແລະ ປ່າໄມ້ແຂວງໄຊຍະບູລີ.



